# ສຶກສາ ຄວາມຮູ້ ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ

ບຸນຈັນ ວົງທອງຄຳ[1], ອິນທະແສງ ອິນທະລາຊາ[2], ຄຳຝັ້ນ ວິລະວົງ[3], ກີຕ້າ ຈັນທະເວດ[4], ເອກແສນປະຕີ[5]
ພາກວິຊາ ຄະນິດສາດ, ຄະນະວິທະຍາສາດທຳມະຊາດ, ມະຫາວິທະຍາໄລຈຳປາສັກ

## ບົດຄັດຫຍໍ້

ໃນການສຶກສາຄວາມຮູ້ ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາ ມະຫາວິ ທະຍາໄລ ຈາປາສັກ ໃນຊ່ວງການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ໂດຍມີຈຸດປະສົງ: 1) ສຶກສາລະດັບຄວາມຮູ້ ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ 2) ສຶກສາຄວາມສຳພັນລະຫວ່າງຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການກປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ໃນຊ່ວງການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ແມ່ນນັກສຶກສາໃນມະຫາວິທະຍາໄລ ຈຳປາສັກ ຈຳນວນ 364 ຄົນ ໂດຍນຳໃຊ້ສູດຂອງ Taro Yamane, ເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາແມ່ນເປັນແບບສອບຖາມ. ວິເຄາະຂໍ້ມູນແມ່ນນຳໃຊ້ໂປຣແກຣມສຳເລັດຮູບ Jamovi ໂດຍການຄຳນວນຫາຄ່າເປີເຊັນ $(\%)$ ຄ່າສະເລ່ຍ $(\bar{X})$ ຄ່າຜັນປ່ຽນມາດຕະຖານ $(S.D)$ ແລະ ການເຄາະຄວາມສຳພັນດ້ວຍສະຖິຕິອ້າງອີງແບບວິທີຂອງ Pearson correlation

ຜົນການສຶກສາພົບວ່າ: ຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນເພດຍິງເຊິ່ງມີຈຳນວນ 192 ຄົນ, ກວມເອົາ 52.70% ມີອາຍຸລະຫວ່າງ 22 – 24 ປີ, ມີຈຳນວນ 239 ຄົນ, ກວມເອົາ 65.70 ນັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດພະຍາດຕິດເຊື້ອໂຄວິດ-19 ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ $(\bar{X}=4.06)$ ຄ່າຜັນປ່ຽນມາດຕະຖານ $(S.D=0.69)$, ຄວາມຮູ້ ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ມີຄວາມສຳພັນກັນຢ່າງມີໃນຍະສຳຄັນທາງສະຖິຕິທີ່ລະດັບ $(p<0.05)$.

**ຄຳສັບສຳຄັນ:** ຄວາມຮູ້, ທັດສະນະຄະຕິ, ພຶດຕິກຳການປ້ອງກັນຕົນເອງ, ເຊື້ອໄວຣັສໂຄວິດ-19

---

[1] *ພາກວິຊາຄະນິດສາດ ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລ ຈຳປາສັກ* bvongthongkham@gmail.com

[2] *ພາກວິຊາຄະນິດສາດ ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລ ຈຳປາສັກ* Intalaxa1977@gmail.com

[3] *ພາກວິຊາຄະນິດສາດ ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລ ຈຳປາສັກ* khamphanhvilavong@gmail.com

[4] *ພາກວິຊາຄະນິດສາດ ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລ ຈຳປາສັກ* gitar.chthv@gmail.com

[5] *ພາກວິຊາຄະນິດສາດ ຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລ ຈຳປາສັ* senpaty79@gmail.com

# Study about knowledge, attitude and self-defense behavior from the spread of the covid-19 of students in Champasak University

**Bounchanh vongthongkham*, Inthaseng Inthalaxa, khamphan vilavong, kitar chantawat and Ek senpati**

Department of Mathematics, Faculty of Natural Sciences, Champasak University

*Correspondence: E-mail: bvongthongkham@gmail.com; ເບີໂທ: +856 *20 77587994*

ABSTRACT

The following goals were set for the study of students at Champasak University's knowledge attitude and behavior in relation to the spread of the covid-19 virus in order to protect themselves the purpose of study: 1) Researching people's knowledge and attitudes regarding the virus-19 infection 2) To research how knowledge, attitude, and behavior relate to self-protection against the Covid-19 virus among Champasak University students during the virus's outbreak. 364 students from Champasak University were chosen as the sample group for this study using the Taron Yamane formula. Standard deviation (S.D.) and correlation coefficient for the reference. The study's findings revealed that: Most of the respondents are female with 192 people, accounting for 52.7% aged between 22-24 years old, with 239 people, accounting for 65.7%, Students have the knowledge, kattitude and behavior to protect themselves from the spread of covid-19 as a whole at the high level with the average value $\left(\bar{X} = 4.06\right)$ standard deviation value $\left(S.D = 0.69\right)$ According to the relationship analysis's findings, knowledge and attitude have a statistically significant relationship with self-defense behavior against the spread of the COVID-19 virus at the $\left(p < 0.05\right)$ significant.

**Keywords:** Knowledge, Attitude, behavior in self-protection, Coronavirus disease 2019.

## 1. ພາກສະເໜີ (Problem statement)

ໃນໄລຍະ 3 ປີຜ່ານມາ, ໄດ້ເກີດມີການລະບາດຂອງພະຍາດເຊື້ອໄວຣັດໂຄວິດ-19 ( Coronavirus Disease -19, COVID-19) ເຊິ່ງໄດ້ເລີ່ມຕົ້ນຢູ່ໃນປະເທດຈີນ, ນັບແຕ່ວັນທີ 30 ທັນວາ 2019 ເປັນຕົ້ນມາໄດ້ພົບຜູ້ປ່ວຍຕິດເຊື້ອໂຄວິດ-19 ຢືນຢັນໃນຫຼາຍປະເທດໃນທົ່ວໂລກ, ຈຳນວນຜູ້ຕິດເຊື້ອໂຄວິດ-19 ເພີ່ມຂຶ້ນຢ່າງວ່ອງໄວ ພົບເຫັນກໍລະນີຜູ້ຕິດເຊື້ອລາຍໃໝ່ແຕ່ລະວັນເປັນຈຳນວນຫຼວງຫຼາຍໃນທົ່ວໂລກ ແລະ ມີຜູ້ເສຍຊີວິດເພີ່ມຂຶ້ນເປັນລາຍວັນ ເຊິ່ງຜູ້ເສຍຊີວິດສ່ວນໃຫຍ່ແມ່ນຜູ້ສູງອາຍຸ, ຜູ້ທີ່ຕິດພັນໃກ້ຊິດກັບຜູ້ປ່ວຍ ແລະ ຜູ້ທີ່ມີໂລກປະຈຳ. ຕາມຂໍ້ມູນຂອງອົງການອະນາໄມໂລກໃນວັນທີ 19 ຕຸລາ 2020 ຈຳນວນຜູ້ຕິດເຊື້ອໄວຣັສໂຄວິດ-19 ໃນທົ່ວໂລກມີ 39,801,612 ຄົນ ແລະ ເສຍຊີວິດ,ມີ 1,110,908 ຄົນ. ການລະບາດຂອງເຊື້ອໄວຣັສໂຄວິດ-19 ໄດ້ແຜ່ລະບາດຢ່າງໄວ, ໃນວັນທີ 11 ມີນາ 2020 ອົງການອະນາໄມໂລກ ໄດ້ປະກາດການລະບາດຂອງພະຍາດໂຄວິດ-19 ເປັນການແຜ່ລະບາດຂອງໂລກ (World Health Organization, 2020)

ການແຜ່ລະບາດຂອງເຊື້ອໄວຣັສດັ່ງກ່າວ ອົງການອານາໄມໂລກ ແລະ ກະຊວງສາທາລະນະສຸກ (ໜ່ວຍງານສະເພາະກິດຂອງ ສປປລາວ) ໄດ້ໃຫ້ຄວາມຮູ້, ຄຳແນະນຳລົງໃນສື່ສັງຄົມອອນໄລນ໌ ເຖິງຜົນກະທົບ ແລະ ຄວາມຮຸນແຮງຂອງເຊື້ອໄວຣັສດັ່ງກ່າວ, ໃຫ້ທຸກຄົນຮັກສາໄລຍະຫ່າງຢ່າງນ້ອຍ 1 ແມັດ ຫຼືກລ້ຽງບຸກຄົນທີ່ມີອາການໄຂ້ຊໍ້າເຮື້ອ, ໄອ, ຈາມ ເພາະໄວຣັສສາມາດຕິດຕໍ່ໄດ້ໂດຍຜ່ານລະອອງຝອຍຂະໜາດນ້ອຍທີ່ມາຈາກການໄອ ຫຼື ຈາມ ເຊິ່ງຖ້າຫາກຢູ່ໃກ້ຊິດກັນເກີນໄປກໍອາດຈະສູດດົມໄວຣັສເຂົ້າຮ່າງກາຍໄດ້, ຫຼີກລ້ຽງການສຳພັດທາງຮ່າງກາຍ, ການເດີນທາງອອກນອກບ້ານ ຫຼື ໄປສະຖານທີ່ຕ່າງໆ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ການແຜ່ເຊື້ອຂອງພະຍາດ (ກະຊວງສາທາລະນະສຸກ, 2022).

ຈາກສະພາບບັນຫາດັ່ງກ່າວກະຊວງສາທາລະນະສຸກຂອງ ສປປ ລາວ ໄດ້ອອກຄຳສັ່ງໃຫ້ຄຳແນະນຳບັນດາອົງການ, ສະຖາບັນການສຶກສາ, ວິທະຍາໄລ, ມະຫາວິທະຍາໄລຕ່າງໆ ໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຜົນກະທົບອັນຮ້າຍແຮງຂອງເຊື້ອໄວຣັສ ເພື່ອປ້ອງກັນຕ້ານ ແລະ ສະກັດກັ້ນການແຜ່ລະບາດໃນ ສປປ ລາວ, ນອກນັ້ນກະຊວງສາທາລະນະສຸກ ກໍມຄວບຄຸມໂລກຕິດຕໍ່ທາງເດີນຫາຍໃຈ ຍັງໄດ້ເຜີຍແຜ່ຂໍ້ມູນຂ່າວສານລົງໃນໜັງສືພິມ, ສື່ສັງຄົມອອນໄລນ໌ ເພື່ອເປັນຄວາມຮູ້ໃຫ້ແກ່ສັງຄົມ, ຊຸມຊົນ ແລະ ບຸກຄົນຕ່າງໆ ຮູ້ເຖິງຜົນກະທົບອັນຮ້າຍແຮງຂອງເຊື້ອໄວຣັສໂຄວິດ-19 ເປັນຕົ້ນແມ່ນການແຜ່ເຊື້ອຂອງພະຍາດ, ວິທີການປ້ອງກັນ, ການໃຫ້ຄຳແນະນຳ, ການຮັກສາໄລຍະຫ່າງ ແລະ ໃສ່ຜ້າປິດປາກທຸກຄັ້ງເມື່ອອອກຈາກບ້ານ (ກະຊວງສາທາລະນະສຸກ, 2022)

ປັດຈຸບັນສະຖານະການ ການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ແມ່ນຍັງຢູ່ໃນການເຝົ້າລະວັງ, ທາງໜ່ວຍ ງານສະເພາະກິດຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຍັງໄດ້ເອົາໃຈໃສ່ຕິດຕາມກວດກາກຸ່ມຄົນທີ່ເດີນທາງເຂົ້າມາໃນປະເທດຢ່າງໃກ້ຊິດ ເປັນຕົ້ນແມ່ນປະເທດທີ່ມີການແຜ່ລະບາດ ແລະ ປະເທດທີ່ມີກຸ່ມສ່ຽງເປັນຕົ້ນ, ໃນສະຖາບັນການສຶກສາມະຫາວິທະຍາໄລ ກໍ່ເປັນອີກໜຶ່ງສະຖານທີ່ຕ້ອງເຝົ້າລະຫວັງ ເຖິງວ່າພະນັກງານຄູອາຈານ ແລະ ນັກສຶກສາ ຈະໄດ້ຮັບການສັກວັກຊີນຄົບຕາມຈຳນວນແລ້ວກໍ່ຕາມ ຈຶ່ງມີຄວາມຈຳເປັນຕ້ອງໄດ້ເຝົ້າລະວັງ ເພາະມີໄວຣັສກາຍພັນໄດ້ບາງສາຍພັນເຊິ່ງມີຄວາມສາມາດໃນການຕ້ານທານວັກຊີນໄດ້ ເນື່ອງຈາກມະຫາວິທະຍາໄລ ຈຳປາສັກ ມີບຸກຄົນສ່ວນຫຼາຍເດີນທາງມາສຶກສາ ຈາກສະຖານທີ່ຕ່າງໆ ທີ່ແຕກຕ່າງກັນເຊິ່ງອາດຕົກຢູ່ໃນກຸ່ມສ່ຽງຕໍ່ການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ອີກ

ທັງນັກສຶກສາມີລະດັບຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງທີ່ແຕກຕ່າງກັນ ຈາກງານວິໄຈຂອງ (Rinrada, 2022).

ຈາກສະພາບບັນຫາທີ່ກ່າວມາຂ້າງເທິງ ດັ່ງນັ້ນ, ຜູ້ວິໄຈຈຶ່ງມີຄວາມສົນໃຈສຶກສາ ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ ໃນຊ່ວງການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ເຊິ່ງຈະເປັນປະໂຫຍດຕໍ່ມະຫາວິ ທະຍາໄລ ຈຳປາສັກ ນຳເອົາຄວາມຮູ້ທີ່ໄດ້ມາເປັນຂໍ້ມູນພື້ນຖານ ໃນການສ້າງແຜນການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດໃຫ້ມີປະສິດທິພາບໃນຄັ້ງຕໍ່ໄປ

## 2. ວິທີການຄົ້ນຄວ້າ (Methods)

ໃນການວິໄຈຄັ້ງນີ້ແມ່ນເປັນການວິໄຈແບບສຳຫຼວດຄວາມຄິດເຫັນຂອງນັກສຶກສາ ໃນມະຫາວິທະຍາໄລ ຈຳປາສັກ ສົກຮຽນ 2021-2022 ໂດຍນຳໃຊ້ແບບສອບຖາມກັບກຳຂໍ້ມູນ.

2.1 ປາຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່: ນັກສຶກມະຫາວິທະຍາໄລ ຈຳປາສັກ ຈຳນວນທັງໝົດ 3847 ຄົນ ຍິງ 1926 ຄົນ. ເຊິ່ງປະກອບດ້ວຍ 6 ຄະນະວິຊາຄື: ຄະນະສຶກສາສາດ 480 ຄົນ ຍິງ 332 ຄົນ, ຄະນະເສດຖະສາດ ແລະ ການຄຸ້ມຄອງ 1289 ຄົນ ຍິງ 835 ຄົນ, ຄະນະກະເສດສາດ ແລະ ປ່າໄມ້ 651 ຄົນ ຍິງ 321 ຄົນ, ຄະນະນິຕິສາດ ແລະ ລັດຖະສາດ 624 ຄົນ ຍິງ 289 ຄົນ, ຄະນະວິສະວະກຳສາດ 724 ຄົນ ຍິງ 93 ຄົນ ແລະ ຄະນະວິທະຍາສາດ-ທຳມະຊາດ 79 ຄົນ ຍິງ 56 ຄົນ, ລວມຈຳນວນນັກສຶກສາທັງໝົດ 3847 ຄົນ ຍິງ 1926 ຄົນ (ມະຫາວິທະຍາໄລ, ຈຳປາສັກ, 2022).

2.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນນັກສຶກສາມະຫາວິທະຍາໄລ ຈຳປາສັກ ຈຳນວນ 364 ຄົນ ເຊິ່ງຂະໜາດກຸ່ມຕົວຢ່າງໄດ້ກຳນົດໂດຍນຳໃຊ້ສູດຂອງ Taro Yamane ໃນການກຳນົດຂະໜາດຂອງກຸ່ມຕົວຢ່າງດ້ວຍລະດັບຄວາມເຊື່ອໝັ້ນ 95% ແລະ ຄ່າຜິດພາດທີ່ຍອມຮັບໄດ້ບໍ່ເກີນ 5% ດັ່ງນີ້: (ບຸນຊຶມ, 1998)

$$n = \frac{N}{\left(1 + Ne^2\right)}$$

$n$ ແມ່ນຈານວນຂອງກຸ່ມຕົວຢ່າງ

$N$ ແມ່ນຈຳນວນປະຊາກອນທັງໝົດ

$e$ ແມ່ນຄ່າຜິດພາດຂອງຂໍ້ມູນທີ່ໄດ້ຈາກກຸ່ມຕົວຢ່າງທີ່ຍອມຮັບໄດ້ (0.05)

$$n = \frac{3847}{\left(1 + 3847\left(0.05\right)^2\right)} = 364 \text{ ຄົນ}$$

2.3 ການໄດ້ມາຂອງກຸ່ມຕົວຢ່າງແມ່ນໄດ້ມາຈາກການແບ່ງຊັ້ນພູມ (Hair, 2010) ໂດຍມີສູດການຄຳນວນຂັ້ນຕອນດັ່ງນີ້:

ຈຳນວນປະຊາກອນໃນແຕ່ລະກຸ່ມ=(ຈຳນວນປະຊາ ກອນທັງໝົດ).(ຈຳນວນປະຊາກອນໃນແຕ່ລະກຸ່ມ)/ປະຊາກອນທັງໝົດ

ຄະນະສຶກສາສາດມີປະຊາກອນທັງໝົດ 480 ຄົນ = (364).(480)/3847=45 ຄົນ

ຄະນະເສດຖະສາດ ແລະ ການຄຸ້ມຄອງ ປະຊາກອນທັງໝົດ 1289 ຄົນ = (364).(1289)/3847=122 ຄົນ

ຄະນະກະເສດສາດ ແລະ ປ່າໄມ້ປະຊາກອນທັງໝົດ 651 ຄົນ = (364).(651)/3847=61 ຄົນ

ຄະນະນິຕິສາດ ແລະ ລັດຖະສາດ ປະຊາກອນທັງໝົດ 642 ຄົນ = (364).(642)/3847=60 ຄົນ

ຄະນະວິສາວະກຳສາດປະຊາກອນທັງໝົດ 724 ຄົນ = (364).(742)/3847=68 ຄົນ

ຄະນະວິທະຍາສາດທຳມະຊາດປະຊາກອນທັງໝົດ 79 ຄົນ = (364).(79)/3847=7 ຄົນ

2.4 ເຄື່ອງມືການສຶກສາ

ເຄື່ອງມືທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນ: ແບບສອບຖາມເຊິ່ງແບ່ງອອກເປັນ 3 ພາກສ່ວນ ໂດຍມີລາຍລະອຽດດັ່ງນີ້:

**ສ່ວນທີ 1** ຂໍ້ມູນທົ່ວໄປຂອງນັກສຶກສາແບບສອບຖາມ

**ສ່ວນທີ 2** ສອບຖາມຂໍ້ມູນ ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກໍາການປ້ອງກັນຕົນເອງຂອງນັກສຶກສາມະຫາວິ ທະຍາໄລ ຈໍາປາສັກ ໃນຊ່ວງການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19

**ສ່ວນທີ 3** ຂໍ້ສະເໜີແນະນໍາເພີ່ມເຕີມຂອງນັກສຶກສາມະຫາວິທະຍາໄລ ຈໍາປາສັກ

2.5 ການວິເຄາະຂໍ້ມູນ

**ສ່ວນທີ 1** ຂໍ້ມູນທົ່ວໄປຂອງນັກສຶກສາຜູ້ຕອບແບບສອບຖາມ ວິເຄາະໂດຍໃຊ້ຄວາມຖີ່ $(f)$ແລະ ເປີເຊັນ $(p)$

**ສ່ວນທີ 2** ຂໍ້ມູນຂອງຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກໍາຂອງນັກສຶກສາ ວິເຄາະໂດຍໃຊ້ຄ່າສະເລ່ຍ

$(\bar{X})$ ແລະ ຄ່າຜັນປ່ຽນມາດຕະຖານ $(S.D)$

**ສ່ວນທີ 3** ຂໍ້ສະເໜີແນະເພີ່ມເຕີມວິເຄາະໂດຍໃຊ້ຄວາມຖີ່ $(f)$ ນັບເປັນເທື່ອຄົນ ແລະ ຄ່າເປີເຊັນ $(p)$

1) ສະຖິຕິທີ່ໃຊ້ວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນຜູ້ວິໄຈໃຊ້ສະຖິຕິພັນລະນາ ແລະ ສະຖິຕິອ້າງອີງເຊິ່ງມີລາຍລະອຽດດັ່ງນີ້:

- ຄ່າເປີເຊັນ $(p)$ ໃຊ້ຄໍານວນຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມ

- ຄ່າສະເລ່ຍ$(\bar{X})$ ແມ່ນການຊອກຫາຄ່າເຄິ່ງກາງຂອງການແຈກຢາຍໃນການຕອບແບບສອບຖາມ ເພື່ອຕີຄວາມໝາຍຄວາມຮູ້ ທັດສະນະຄະຕິຂອງນັກສຶກສາ ແລະ ພຶດຕິກໍາການປ້ອງກັນຕົນເອງຂອງນັກສຶກສາ ໃນມະຫາວິທະຍາ ໄລ ຈໍາປາສັກ.

- ຄ່າຜັນປ່ຽນມາດຕະຖານ (Standard Deviation: S.D) ໃຊ້ຕີລາຄາຜົນການຄິດໄລ່ຂອງຄ່າສະເລ່ຍສາມາດຢັ້ງຢືນເຖິງຄ່າໃກ້ຄຽງການແຈກຢາຍຂອງຜູ້ຕອບແບບສອບຖາມຂອງນັກສຶກສາ ໃນມະຫາວິທະຍາໄລ ຈໍາປາສັກ.

- ສະຖິຕິອ້າງອີງແບບ person correlation ໃຊ້ເພື່ອຫາຄວາມສໍາພັນລະຫວ່າງ ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກໍາການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາ ມະຫາວິທະຍາໄລ ຈໍາປາສັກ.

1) ເກນການໃຫ້ຄະແນນແບບສອບຖາມແມ່ນເປັນມາດຕາສ່ວນ (Rating Seale) ຕາມແບບຂອງ Liker`s Scale ເຊິ່ງມີ 5 ລະດັບ ດັ່ງນີ້:

ຄະແນນ 5 ລະດັບຄວາມຄິດເຫັນ ຫຼາຍທີ່ສຸດ
ຄະແນນ 4 ລະດັບຄວາມຄິດເຫັນ ຫຼາຍ
ຄະແນນ 3 ລະດັບຄວາມຄິດເຫັນ ປານກາງ
ຄະແນນ 2 ລະດັບຄວາມຄິດເຫັນ ໜ້ອຍ
ຄະແນນ 1 ລະດັບຄວາມຄິດເຫັນ ໜ້ອຍທີ່ສຸດ

ຄວາມກ້ວາງຂອງຊັ້ນ

$$C = \frac{X_{\max} - X_{\min}}{K}$$

$$= \frac{5-1}{5}$$

$$= 0.8$$

ກໍານົດເກນການແປຄວາມໝາຍ ຄ່າສະເລຍ ຕາມເກນ (ເພັນແຂ ສີຣິວັນ, 2008) ຂອງຂໍ້ມູນທີ່ໄດ້ມາ ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກໍາໃນການປ້ອງກັນຕົນເອງຂອງນັກສຶກສາມະຫາວິທະຍາໄລ ຈໍາປາສັກ ດັ່ງນີ້:

ຄ່າສະເລ່ຍ 4.21-5.00 ໝາຍຄວາມວ່ານັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກໍາໃນການປ້ອງກັນຕົນເອງຢູ່ໃນລະດັບຫຼາຍທີ່ສຸດ.

ຄ່າສະເລ່ຍ 3.41 – 4.20 ໝາຍຄວາມວ່າ ນັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຢູ່ໃນລະດັບຫຼາຍ.

ຄ່າສະເລ່ຍ 2.61 – 3.40 ໝາຍຄວາມວ່າ ນັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຢູ່ໃນລະດັບປານກາງ.

ຄ່າສະເລ່ຍ 1.81 – 2.60 ໝາຍຄວາມວ່ານັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຢູ່ໃນລະດັບນ້ອຍ.

ຄ່າສະເລ່ຍ 1.00 – 1.80 ໝາຍຄວາມວ່ານັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການ ປ້ອງກັນຕົນເອງຢູ່ໃນລະດັບນ້ອຍທີ່ສຸດ.

ກຳໜົດຄ່າລະດັບຄວາມສຳພັນຈາກຄ່າ r (Wiersma & G. Jurs, 2009) ດັ່ງນີ້:

**ຕາຕະລາງທີ 2.1 ເກນການກວດສອບລະດັບຄວາມສຳພັນ**

| ຄ່າສະເລ່ຍຄວາມສຳພັນ | ລະດັບຄວາມສຳພັນ |
|---|---|
| 0.01 - 0.20 | ມີຄວາມສຳພັນໃນລະດັບທີ່ຕ່ຳຫຼາຍ |
| 0.21 - 0.50 | ມີຄວາມສຳພັນໃນລະດັບທີ່ຕ່ຳ |
| 0.51 - 0.80 | ມີຄວາມສຳພັນໃນລະດັບທີ່ປານກາງ |
| 0.81 - 1.00 | ມີຄວາມສຳພັນໃນລະດັບທີ່ສູງ |

## 3. ຜົນໄດ້ຮັບ (Results)

3.1 ຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

ຕາຕະລາງທີ 3.1 ຜົນການວິເຄາະຂໍ້ມູນຈຳແນກຕາມເພດຂອງຜູ້ຕອບແບບສອບຖາມ

| ລ/ດ | ຂໍ້ມູນດ້ານເພດ | ຈຳນວນ (ຄົນ) | ຄິດເປັນເປີເຊັນ (%) |
|---|---|---|---|
| 1 | ຊາຍ | 172 | 47.3 |
| 2 | ຍິງ | 192 | 52.7 |
| ລວມ | | 364 | 100 |

ຈາກການວິເຄາະຂໍ້ມູນທົ່ວໄປດ້ານເພດຂອງຜູ້ຕອບແບບສອບຖາມ ເຫັນວ່າຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນເພດຍິງເຊິ່ງມີຈຳນວນ 192 ຄົນ, ກວມເອົາ 52.7% ຂອງກຸ່ມຕົວຢ່າງທັງໝົດ.

ຕາຕະລາງທີ 3.2 ຜົນການວິເຄາະຂໍ້ມູນຈຳແນກຕາມຊ່ວງອາຍຸຂອງຜູ້ຕອບແບບສອບຖາມ

| ລ/ດ | ຂໍ້ມູນດ້ານອາຍຸ | ຈຳນວນ (ຄົນ) | ຄິດເປັນເປີເຊັນ (%) |
|---|---|---|---|
| 1 | 16 ປີ– 18 ປີ | 14 | 03.8 |
| 2 | 19 ປີ- 21 ປີ | 22 | 06.0 |
| 3 | 22 ປີ– 24 ປີ | 239 | 65.7 |
| 4 | 25>= | 89 | 24.5 |
| ລວມ | | 364 | 100 |

ຈາກການວິເຄາະຂໍ້ມູນດ້ານອາຍຸຂອງຜູ້ຕອບແບບສອບຖາມ ເຫັນວ່າສ່ວນຫຼາຍແມ່ນຜູ້ທີ່ມີອາຍຸລະຫວ່າງ 22 – 24 ປີ ມີຈຳນວນ 239 ຄົນ, ກວມເອົາ 65.7% ຂອງກຸ່ມຕົວຢ່າງທັງໝົດ.

ຕາຕະລາງທີ 3.3 ຜົນການວິເຄາະຂໍ້ມູນຈຳແນກຕາມຄະນະວິຊາຂອງຜູ້ຕອບແບບສອບຖາມ

| ລ/ດ | ຄະນະວິຊາ | ຈຳນວນກຸ່ມຕົວຢ່າງ (ຄົນ) | ຄິດເປັນເປີ ເຊັນ (%) |
|---|---|---|---|
| 1 | ສຶກສາສາດ | 45 | 12.36 |
| 2 | ເສດຖະສາດ ແລະ ການຄຸ້ມຄອງ | 122 | 33.52 |
| 3 | ກະເສດສາດ ແລະ ປ່າໄມ້ | 61 | 16.76 |
| 4 | ນິຕິສາດ ແລະ ລັດຖະສາດ | 60 | 16.48 |
| 5 | ວິສາວະກຳສາດ | 68 | 18.68 |
| 6 | ວິທະຍາສາດທຳມະຊາດ | 7 | 1.92 |
| ລວມ | | 364 | 100 |

ຈາກຜົນການວິເຄາະຂໍ້ມູນຈຳແນກຕາມຄະນະຂອງຜູ້ຕອບແບບສອບຖາມ ເຫັນວ່າຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນນັກສຶກສາຄະນະເສດຖະສາດ ແລະ ການຄຸ້ມຄອງເຊິ່ງມີຈຳນວນ 122 ຄົນ ກວມເອົາ 33.52% ສ່ວນຜູ້ຕອບແບບສອບຖາມຄະນະວິຊາທີ່ນ້ອຍທີ່ສຸດຄື ຄະນະວິທະຍາສາດທຳມະຊາດມີຈຳນວນ 7 ຄົນ ກວມເອົາ 1.92%

3.2 ຜົນການວິເຄາະຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19.

ຕາຕະລາງທີ 3.4 ສະແດງເຖິງຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19

| ລ/ດ | ເນື້ອໃນ | ຄ່າສະເລ່ຍ $\bar{X}$ | ຄ່າຜັນປ່ຽນ $S.D$ | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ຄວາມຮູ້ | 4.18 | 0.65 | ຫຼາຍ |
| 2 | ທັດສະນະຄະຕິ | 4.12 | 0.62 | ຫຼາຍ |
| 3 | ພຶດຕິກຳ | 3.90 | 0.80 | ຫຼາຍ |
| ລວມ | | 4.06 | 0.69 | ຫຼາຍ |

ຈາກການວິເຄາະ ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ໂດຍລວມເຫັນວ່າ ນັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ$(\bar{X} = 4.06)$ ແລະ ຄ່າຜັນປ່ຽນມາດຖານ $(S.D = 0.69)$ ເມື່ອພິຈາລະນາໃນແຕ່ລະດ້ານເຫັນວ່າດ້ານຄວາມຮູ້ກ່ຽວກັບການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາມີຄ່າສະເລ່ຍຫຼາຍທີ່ສຸດຄື$(\bar{X} = 4.18)$ແລະ ຄ່າຜັນປ່ຽນມາດຕະຖານ $(S.D = 0.65)$ ດ້ານທັດສະນະຄະຕິຕໍ່ການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ມີຄ່າສະເລ່ຍ$(\bar{X} = 4.12)$ ແລະ ຄ່າຜັນປ່ຽນມາດຖານ $(S.D = 0.62)$ສ່ວນດ້ານພຶດຕິກຳໃນການປ້ອງກັນຕົນເອງ ຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາມີຄ່າສະເລ່ຍ $(\bar{X} = 3.90)$ແລະ ຄ່າຜັນປ່ຽນມາດຕະຖານ $(S.D = 0.80)$

3.3 ຜົນການວິເຄາະຄວາມສຳພັນລະຫວ່າງຄວາມຮູ້, ທັດສະນະຄະຕິ, ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19.

| ຕົວປ່ຽນ | ຄວາມຮູ້ | ທັດສະນະຄະຕິ | ພຶດຕິກຳ |
|---|---|---|---|
| ຄວາມຮູ້ | 1.00 | | |
| ທັດສະນະຄະຕິ | 0.91** | 1.00 | |
| ພຶດຕິກຳ | 0.90** | 0.84** | 1.00 |

*p-value<0.05

ຈາກຜົນການວິເຄາະຄວາມສຳພັນແບບ Pearson's correlation ພົບວ່າຄວາມຮູ້ມີຄວາມສຳພັນກັບທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສ-19 ຢູ່ໃນລະດັບຫຼາຍ ໂດຍມີຄ່າ$\left(r = 0.91^{**}\right)$ ແລະ $\left(r = 0.90^{**}\right)$ ຕາມລຳດັບຢ່າງມີໃນຍະສຳຄັນທາງສະຖິຕິທີ່ລະດັບ $(p < 0.05)$ ທັດສະ ນະຄະຕິກ່ຽວກັບການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ມີຄວາມສຳພັນກັບພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສ-19 ໃນລະດັບຫຼາຍ ໂດຍມີຄ່າ$\left(r = 0.84^{**}\right)$ຢ່າງມີໃນຍະສຳຄັນທາງສະຖິຕິທີ່ລະດັບ $(p < 0.05)$

**4. ວິພາກຜົນ (Discussion)**

1) ວິພາກຂໍ້ມູນທົ່ວໄປຂອງນັກສຶກສາມະຫາວິທະຍາໄລ ຈຳປາສັກ

ດ້ານເພດເຫັນວ່າຜູ້ແບບສອບຖາມສ່ວນຫຼາຍແມ່ນເພດ ຍິງ ເຊິ່ງມີຈຳນວນ 192 ຄົນ ກວມເອົາ 52.70% ຮອງລົງມາແມ່ນເພດຊາຍເຊິ່ງມີຈຳນວນ 172 ຄົນ ກວມເອົາ 47.30 % ຂອງຈຳນວນຕົວຢ່າງທັງໝົດ.

ດ້ານອາຍຸເຫັນວ່າຜູ້ຕອບແບບສອບຖາມສ່ວຍຫຼາຍແມ່ນມີອາຍຸລະຫວ່າງ 22-24 ປີ ເຊິ່ງມີຈຳນວນ 239 ຄົນ ກວມເອົາ 65.70%, ກຸ່ມອາຍຸ 25 ປີ ຂຶ້ນໄປເຊິ່ງມີຈຳນວນ 89 ຄົນ ກວມເອົາ 24.50%, ກຸ່ມອາຍຸ 19-21 ປີ ເຊິ່ງມີຈຳນວນ 22 ຄົນ ກວມເອົາ 06.0% ແລະ ກຸ່ມອາຍຸ 16-18 ປີ ເຊິ່ງມີຈຳນວນ 14 ຄົນ ກວມເອົາ 03.80%.

2) ວິຈານຄວາມຮູ້, ທັດສະນະຄະຕິນ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19

ຈາກຜົນການວິເຄາະ ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ໂດຍລວມເຫັນວ່າ ນັກສຶກສາມີຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ$\left(\bar{X} = 4.06\right)$ ແລະ ຄ່າຜັນປ່ຽນມາດຖານ $(S.D = 0.69)$ ເມື່ອພິຈາລະນາໃນແຕ່ລະດ້ານເຫັນວ່າດ້ານຄວາມຮູ້ກ່ຽວກັບການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາມີຄ່າສະເລ່ຍຫຼາຍທີ່ສຸດຄື$\left(\bar{X} = 4.18\right)$ແລະ ຄ່າຜັນປ່ຽນມາດຕະຖານ $(S.D = 0.65)$ ດ້ານທັດສະນະຄະຕິຕໍ່ການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ມີຄ່າສະເລ່ຍ$\left(\bar{X} = 4.12\right)$ ແລະ ຄ່າຜັນປ່ຽນມາດຖານ $(S.D = 0.62)$ ສ່ວນດ້ານພຶດຕິກຳໃນການປ້ອງກັນຕົນເອງ ຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາມີຄ່າສະເລ່ຍ $\left(\bar{X} = 3.90\right)$ແລະ ຄ່າຜັນປ່ຽນມາດຕະຖານ $(S.D = 0.80)$

3) ວິຈານຄວາມສາພັນ

ຈາກການສຶກສາຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ໃນຊ່ວງການແຜ່ລະບາດ ພົບວ່າ: ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ມີຄວາມສຳພັນກັນຢ່າງມີໃນຍະສຳຄັນທາງສະຖິຕິທີ່ລະດັບ $(p < 0.05)$ ສອດຄ່ອງກັບທິດສະດີຂອງທ່ານ ບລູມ (Bloom, 1964) ທີ່ເວົ້າວ່າ: ຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳເປັນຂະບວນການທີ່ເຊື່ອມໂຍງຢ່າງເປັນຂັ້ນຕອນເພື່ອໃຫ້ເກີດພຶດຕິກຳທີ່ຕ້ອງການເຊິ່ງມີ 3 ອົງປະກອບ 1) ຄວາມຮູ້ (Knowledge) ເປັນຂະບວນການທາງສະໝອງ ທີ່ມີຂັ້ນຕອນໃນການພັດທະນາສະຕິປັນຍາ ແລະ ກ່ຽວຂ້ອງກັບການຮັບຮູ້ການຈື່ຈຳຂໍ້ມູນຕ່າງໆ ເພື່ອນຳມາປະກອບໃນການຕັດສິນໃຈ. 2) ທັດສະນະຄະຕິ (Attitude) ເປັນຂະບວນການທາງດ້ານຈິດໃຈອາລົມຄວາມຮູ້ສຶກ ຄວາມມັກຄວາມນິຍົມ ຄວາມເຊື່ອ ການໃຫ້ຄຸນຄ່າ ແລະ ການສະແດງອອກເຖິງຄຸນລັກສະນະຄ່ານິຍົມທີ່ເຊື່ອຖືເຊິ່ງຈະບອກແນວໂນ້ມຂອງການກະທຳ ແລະ ພຶດຕິກຳຂອງຕົວບຸກຄົນ ແລະ 3) ການປະຕິບັດ (Practice) ເປັນການສະແດງອອກທາງຮ່າງກາຍເຊິ່ງຕ້ອງອາໃສຄວາມຮູ້ ແລະ ທັດສະນະຄະຕິທີ່ຈະເຮັດໃຫ້ການປະຕິບັດຕາມການຮັບຮູ້ເຊິ່ງເປັນຂັ້ນຕອນສຸດທ້າຍທີ່ຕ້ອງໃຊ້ໄລຍະເວລາໃນການຕັດສິນໃຈ ແລະ ຕົງກັບງານວິໄຈຂອງທ່ານ (Treeamorn, Wasaruch, & Ketsarin, 2022) ໄດ້ສຶກສາຄວາມສຳພັນລະຫວ່າງຄວາມຮູ້ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນໂລກຕິດເຊື້ອໄວຣັສໂຄວິດ-19 ຂອງປະຊາຊົນທີ່ອາໃສໃນຊຸມຊົນເມືອງ ຜົນການສຶກສາພົບວ່າ ກຸ່ມຕົວຢ່າງສ່ວນຫຼາຍມີຄວາມຮູ້ກ່ຽວກັບເຊື້ອໄວຣັສໂຄວິດ-19 ຢູ່ໃນລະດັບຫຼາຍທີ່ສຸດໂດຍມີຄ່າສະເລ່ຍ $\left(\bar{X} = 4.54\right)$ ແລະ ຄ່າຜົນປ່ຽນມາດຕະຖານ $(S.D = 0.65)$ ມີທັດສະນະຄະຕິໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ $\left(\bar{X} = 4.23\right)$ ແລະ ຄ່າຜົນປ່ຽນມາດຕະຖານ $(S.D = 0.72)$ ແລະ ມີພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ໃນລະດັບຫຼາຍໂດຍມີຄ່າສະເລ່ຍ $\left(\bar{X} = 3.97\right)$ ແລະ ຄ່າຜົນປ່ຽນມາດຕະຖານ $(S.D = 0.66)$ ຜົນການວິເຄາະຄວາມສຳພັນລະຫວ່າງຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄບິດ-19 ເຫັນວ່າປ່ຽນແຕ່ລະຕົວມີຄວາມສຳພັນກັນຢ່າງມີໃນຍະຄວາມສຳພັນທາງສະຖິຕິທີ່ລະດັບ $(p < 0.05)$

## 5. ສະຫຼຸບຜົນ (Conclusion)

ການສຶກສາຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ຂອງນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ໃຫ້ເຫັນວ່າ, ນັກສຶກສາ ມະຫາວິທະຍາໄລ ຈຳປາສັກ ມີລະດັບຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ໂດຍລວມຢູ່ໃນລະດັບຫຼາຍ ແລະ ພົບວ່າຄວາມຮູ້, ທັດສະນະຄະຕິ ແລະ ພຶດຕິກຳການປ້ອງກັນຕົນເອງຈາກການແຜ່ລະບາດຂອງເຊື້ອໄວຣັສໂຄວິດ-19 ມີຄວາມສຳພັນກັນຢ່າງມີໃນຍະສຳຄັນທາງສະຖິຕິທີ່ລະດັບ $(p < 0.05)$

## 6. ຄວາມຮູ້ບຸນຄຸນ (Acknowledgment)

ຂ້າພະເຈົ້າໃນນາມເປັນນັກຄົ້ນຄວ້າຂໍຮູ້ບຸນຄຸນມາທາງອົງການຈັດຕັ້ງທຸກຂັ້ນທີ່ໃຫ້ຄວາມຮ່ວມມືສະໜອງຂໍ້ມູນທີ່ສຳຄັນໃຫ້ຂ້າພະເຈົ້າ ເຮັດບົດຄົ້ນຄວ້າຈົນສຳເລັດ ຂໍຂອບໃຈມາທາງຄູອາຈານ ແລະ ນັກສຶກສາຈາກຄະນະວິຊາຕ່າງໆ ໃນມະຫາວິທະຍາໄລ ຈຳປາ

ສັກ ທີ່ໃຫ້ຄວາມຮ່ວມມືຕອບແບບສອບຖາມ ຂອງທີມງານຂ້າພະເຈົ້າຈຶ່ງໄດ້ຂໍ້ມູນທີ່ມີຄວາມຈິງຈຶ່ງ ສາມາດວິເຄາະອອກມາຕາມຈຸດປະສົງທີ່ຕັ້ງໄວ້ໃນ ເບື້ອງຕົ້ນ.

**ເອກະສານອ້າງອີງ**


ກະຊວງສາທາລະນະສຸກ. (2022). *ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸ ລະໂລກສາຍພັນໃໝ່ (COVID-19).* ສືບຄົ້ນ ເມື່ອວັນທີ 7 ມີນາ 2023 ຈາກ https://www.covid19.gov.la/index.php

ມະຫາວິທະຍາໄລ ຈຳປາສັກ. (2023). *ສະຖິຕິນັກສຶກ ສາ.* ປາກເຊ: ບົດລາຍງານສະຖິຕິນັກສຶກສາປະ ຈຳປີ, ຫ້ອງການວິຊາການ.

ບຸນຊົມ ສີສະອາດ. (1998). *ວິທີການທາງສະຖິຕິສຳຫຼັບ ການວິໄຈ.* (1, Ed.) ມະຫາສາລະຄາມ: ພາກ ວິຊາພື້ນຖານຂອງການສຶກສາ ຄະນະສຶກສາ ສາດ ມະຫາວິທະຍາໄລ ສີນະຄະລິນທາວິໂລດ ມະຫາສາລະຄາມ.

ເພັນແຂ ສີຣິວັນ. (2008). *ສະຖິຕິເພື່ອການວິໄຈ.* ກຸງເທບ ມະຫານະຄອນ: ເຫັກແອັນເຈີນັບພັບລິເຄຊັນ.

Bloom, B. S. (1964). *Taxonomy of education objective: The classification of educational goals: Handbook II: Affective domain.* New York: David Mckay.

Hair, j. F. (2010). *Multivariate data analysis aglobal perspective.* (7th, Ed.) New jersey: Prentice-Hall international.

Kasl, S., & Cobb, S. (2345). Health behavior, illness behavior, and sick role behavior. I. Health and illness behavior. *Arch Environ Health, 12*(2). doi:10.1080/00039896.1966.10664365

Likert, R. (1932). *A Technique for the Measurement of Attitudes.* Archives of Psychology.

Rinrada, D. (2022). Knowledge, Attitude and Preventive Behavior toward COVID-19 among grade 10-12 students in Bangkok. *journal of prevention and urban disease control, 6*(2), 10-13.

The jamovi project (2023). jamovi. (Version 2.4) [Computer Software]. Retrieved from https://www.jamovi.org.

Treeamorn, V., Wasaruch, S.-a., & Ketsarin, S. (2022). Knowledge, Attitude, and Covid-19 Prevention Behavior Among Residents Living in Urban Communities. *INSTITUTE FOR URBAN DISEASE CONTROL AND PREVENTION JOURNAL, 6*(2), 192-198.

Wiersma, W., & G. Jurs, S. (2009). *Research Method in Education an Introduction.* (9th, Ed.) Massachusetts: Pearson.

World Health Organization. (2020). *Naming the coronavirus disease (COVID-19) and the virus that causes it. (Online). Retrieved January 19, 2020, Website:.* Retrieved from https://www.who.int/emergencies/diseases/novelcoronavirus-2019/technical-guidance/naming-the-coronavi

Yamane, T. (1973). *Statistics in introductory analysis.* (2nd, Ed.) Tokyo: Aoyama Gakuin Universit